

## ປະຫວັດຄວາມເປັນມາຂອງຊົນເຜົ່າໄຕ

ປະຫວັດຄວາມເປັນມາຂອງຊົນເຜົ່າໄຕ ແມ່ນຄ້າຍໆກັບຊົນເຜົ່າລາວ, ເຜົ່າລື້ ຊົນເຜົ່າໄຕໄດ້ເຄື່ອນຍ້າຍຈາກດິນ ແດນ ແຄ້ວນໃຕ້ ຂອງຈີນ ລົງມາຕາມລ້ອງແມ່ນນ້ຳດຳ, ແມ່ນ້ຳເມົາເຂົ້າສູ່ປະເທດຫວຽດນາມແຂວງເຊີນລາ ໄລເຈົາ ແລະ ດຽນບຽນຟູ ແລະ ເຂົ້າມາຕັ້ງຖິ່ນຖານບ້ານເກີດເມືອງນອນ ຢູ່ແຂວງອຸດົມໄຊ ໄດ້ຫຼາຍຮ້ອຍພັນປີມາແລ້ວ, ຊົນເຜົ່າໄຕມີຢູ່ບັນດາເມືອງຂອງແຂວງອຸດົມໄຊ.

ຊື່ເອີ້ນ: ຊົນເຜົ່າໄຕຢູ່ແຂວງ ອຸດົມໄຊ ມີຫຼາຍຊື່ເອີ້ນທີ່ແຕກຕ່າງກັນ. ຊື່ເດີມ ແລະ ຊື່ທີ່ເຂົາເຈົ້າມັກທີ່ສຸດກໍ່ແມ່ນເຜົ່າ ໄຕ ແມ່ນຖືກຕ້ອງກັບສຳນຽງເອີ້ນຂອງເຂົາເຈົ້າເອງ, ສ່ວນຊົນເຜົ່າອື່ນໆ. ເອີ້ນແມ່ນບໍ່ຖືກກັບສຳນຽງຂອງຊົນເຜົ່າໄຕຈະອອກເປັນສຳນຽງເປັນ ໄທ ຫຼາຍກ່ວາ ເຖິງແມ່ນວ່າຈະເອີ້ນວ່າ: ໄຕ ຫຼື ໄທ ລ້ວນແຕ່ມີຄວາມຫມາຍແມ່ນ ຄົນ.

ຊົນເຜົ່າໄຕ ແມ່ນຊື່ເອີ້ນຕາມການນຸ່ງຫົ່ມເຄື່ອງແຕ່ງກາຍຂອງເຂົາເຈົ້າເປັນສ່ວນໃຫຍ່ ເຊັ່ນວ່າ: ຖ້ານຸ່ງສີດຳກໍ່ ເອີ້ນວ່າ: ໄຕດຳ, ຖ້ານຸ່ງສີຂາວກໍ່ເອີ້ນວ່າ: ໄຕຂາວ, ນຸ່ງສີແດງ ກໍ່ເອີ້ນວ່າ: ໄຕແດງ ແລະ ອື່ນໆ. ຊົນເຜົ່າໄຕຢູ່ ແຂວງອຸດົມໄຊປະກອບມີ ສອງແຂງຄື: ໄຕດຳ ແລະໄຕຂາວ.

ພາສາ: ຊົນເຜົ່າໄຕ ຢູ່ ແຂວງອຸດົມໄຊ ໄດ້ຈັດເຂົ້າໃນຫມວດພາສາ ລາວ-ໄຕ, ຊົນເຜົ່າໄຕມີຕົວຫນັງສືຂອງຊົນ ເຜົ່າຕົນເອງ, ມີພາສາປາກເວົ້າເປັນຂອງຕົນເອງ ແຕ່ຕົວຫນັງສືມີລັກສະນະຄ້າຍໆກັບຕົວຫນັງສືລາວບູຮານ ແຕ່ມີ ສຳນຽງສຽງປາກເວົ້າແຕກຕ່າງກັນ. ໜັງສືຂຽນຂອງຊົນເຜົ່າໄຕນີ້ມີແຕ່ຄົນເຖົ້າຄົນແກ່ຈຳນວນຫນຶ່ງເທົ່ານັ້ນຈຶ່ງຮູ້ ອ່ານ ແລະ ຮູ້ຂຽນ. ສ່ວນຄົນລຸ້ນຫນຸ່ມເກີດໃໝ່ໃຫຍ່ລຸນ ບໍ່ສາມາດອ່ານໄດ້ຂຽນເປັນຈັກຄົນເລີຍ.

ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ - ສັງຄົມຂອງຊົນເຜົ່າໄຕຢູ່ ແຂວງອຸດົມໄຊ: ແມ່ນສຸດທີ່ອຸດົມສົມບູນ ແລະ ໄດ້ສືບທອດກັນແຕ່ສະໄຫມບູຮານຫຼາຍຮ້ອຍພັນປີມາແລ້ວ, ຊົນເຜົ່າໄຕ ມີຄວາມເຊື່ອຖືບັນດາຜີເຊັ່ນ: ຜີພໍ່, ຜີແມ່, ຜີເຮືອນ, ຜີບ້ານ, ຜີເມືອງ, ຜີເງືອກ, ຜີປ່າ ແລະ ຜີອື່ນໆ. ແຕ່ຜີທີ່ມີຄວາມສຳຄັນ ແລະ ສັກສິດກ່ວາກໍ່ແມ່ນຜີເຮືອນ, ແຕ່ລະເຮືອນຈະມີຮ້ານຜີໄວ້ຢູ່ແຈເຮືອນ ຫຼື ຢູ່ເທິງສົຫນ້າເຮືອນ (ທັ້ງເທວະ ດາເຮືອນສະຖານທີ່ບ່ອນສຳຄັນ, ບ່ອນສັກສິດ ແລະ ບ່ອນສັກກະລະບູຊາກ່ວາຫມູ່ໃນເຮືອນແມ່ນເທວະດາເຮືອນ, ຫໍຜີບ້ານ, ຫໍຜີເມືອງ ແລະ ບ່ອນຜີປ່າຊ້າຂອງຊາວບ້ານແມ່ນແຕະຕ້ອງບໍ່ໄດ້ເດັດຂາດ.

ດ້ານລະບົບຄອບຄົວ: ເລືອດເນື້ອເຊື້ອສາຍແລະການສືບທອດຕະກຸນຂອງເຜົ່າໄຕແມ່ນລູກຊາຍຈະໄດ້ສືບທອດຕະກຸນທາງພໍ່, ສ່ວນແມ່ຍິງແຕ່ງງານແລ້ວແມ່ນຕ້ອງໄດ້ໄປເອົາຕະກຸນທາງຜົວ. ເຜົ່າໄຕໄດ້ປະຕິບັດຮີດຄອງປະເພນີແບບຜົວ-ດຽວເມຍດຽວ, ການແບ່ງປັນມູນມັງມໍລະດົກຂອງພໍ່ແມ່ຜູ້ເປັນລູກຊາຍກໍຈະໄດ້ຮັບຫຼາຍກ່ວາ ຫມູ່. ສາເຫດກໍ່ຍ້ອນຜູ້ເປັນລູກຊາຍກົກຕ້ອງໄດ້ລ້ຽງດູພໍ່ແມ່ຫຼາຍກ່ວາຫມູ່ສ່ວນລູກຊາຍຜູ້ອື່ນໆ, ກໍ່ໄດ້ຮັບມູນມັງມໍລະດົກຂອງພໍ່ແມ່ຄືກັນ. ສ່ວນລູກຍິງພໍ່ແມ່ຈະ ແບ່ງປັນສັດລ້ຽງໃຫ້ເຊັ່ນວ່າ: ງົວ, ຄວາຍ ແລະ ອື່ນໆ. ຜ່ານການລົງສຳຫຼວດເກັບກຳຂໍ້ມູນແຕ່ລະບ້ານຂອງເຜົ່າໄຕຢູ່ ແຂວງອຸດົມໄຊ ຈະພົບເຫັນສິ່ງຊາວ ຫຼື ວ່າຕະກຸນເປັນໂຕສັດຫຼາຍກ່ວາຄື: ຊິ່ງເຍື່ອງ, ຊິ່ງນົກຕັ້ງລໍ້, ຊິ່ງກາ, ຊິ່ງຄ່າງ ແລະ ອື່ນໆ. ແຕ່ລະຕະກຸນກໍ່ຈະມີການຄະລຳ ແລະ ຂໍ້ຫ້າມແຕກຕ່າງກັນເຊັ່ນວ່າ: ຄະລຳບໍ່ໃຫ້ຂ້າ ແລະ ກິນຊີ້ນສັດທີ່ເປັນຊິ່ງ ແລະ ຕະກຸນຂອງຕົນເອງເດັດຂາດ.

ດ້ານລັກສະນະເຮືອນ: ຂອງຊົນເຜົ່າໄຕ ແມ່ນມີລັກສະນະເຮືອນບູຮານ, ພວກເຮົາຈະພົບເຫັນແຕ່ລະບ້ານ ຂອງເຜົ່າໄຕ ແມ່ນປຸກສ້າງເຮືອນຮ້ານເສົາເຮືອນເຮັດດ້ວຍໄມ້ແກ່ນລ້ວນທີ່ແຂງແຮງທີ່ສຸດ. ເສົາເຮືອນຝັງ ຫຼື ເອົາກ້ອນຫີນມາຫມູນ (ເສົາຕັ້ງ) ປູພື້ນເຮືອນດ້ວຍຝາກ, ແອ້ມດ້ວຍໄມ້ເຮັ້ຍ, ໄມ້ຊອດ ແລະ ມຸງດ້ວຍຫຍ້າຄາ ຫຼື ໃບຫວາຍ, ໃບຄໍ້ ແລະ ອື່ນໆ, ສັງເກດ ເຫັນໄດ້ວ່າເຮືອນຂອງເຜົ່າໄຕແຕ່ລະຫຼັງບໍ່ວ່າຈະນ້ອຍ ຫຼື ໃຫຍ່ ລ້ວນແຕ່ມີຊານ ເປັນບ່ອນໄວ້ກິນໃຊ້, ຢູ່ກ້ອງຕາລ່າງເປັນບ່ອນເກັບມ້ຽນເຄື່ອງຂອງທຳການຜະລິດຕ່າງໆ ໃນເຮືອນຂອງເຜົ່າໄຕ ບໍ່ໄດ້ຂັ້ນຫ້ອງນອນຄືຊົນເຜົ່າອື່ນໆ. ເຂົາເຈົ້າພຽງແຕ່ໃຊ້ຜ້າກັ້ງຍາວແຕ່ຝາເບື້ອງນີ້ເຖິງຝາເບື້ອງນັ້ນ ແຕ່ໃນກຳລະນີພິທີກທາງຮີດຄອງປະເພນີພາຍໃນເຮືອນເຜົ່າໄຕຈະມີການຄະລຳ ແລະ ຂໍ້ຫ້າມຕ່າງໆ, ເຊັ່ນ: ບໍ່ໃຫ້ຂ້ວມຈອກນ້ຳ ແລະ ຈອກເຫຼົ້າ.

ເຜົ່າໄຕມີປະເພນີການເກີດລູກ: ຢູ່ໃນເຮືອນແຄມເຕົາໄຟ, ມີການເບິ່ງແຍງຊ່ວຍເຫຼືອຈາກແມ່ຍິງ ທີ່ມີປະສົບ ການຕິດຕາມຊ່ວຍປະສູດເວລາເກີດຍາກ, ພາຍຫຼັງເກີດແລ້ວມີການຢູ່ກຳເດືອນ, ດື່ມນ້ຳຕົ້ມຈົນຮອດເວລາອອກກຳ.

ພິທີກຳສົ່ງສະການ: ເວລາມີຄົນຕາຍຂອງເຜົ່າໄຕ ແມ່ນຈັດພິທີກຳໃຫຍ່ທີ່ສຸດ ເພື່ອສົ່ງວິນຍານຂອງຜູ້ຕາຍໄປ ຮອດໂລກໃຫມ່, ຫຼັງຈາກນັ້ນຈຶ່ງສົ່ງສະການດ້ວຍວິທີຂຸດຂຸມຝັງສົບຢູ່ປ່າຊ້າຂອງບ້ານເຜົ່າ ໄຕມີຮີດຄອງປະເພນີ ແລະ ວັດທະນະທຳທີ່ສືບທອດກັນມາແຕ່ບູຮານນະການໃນປີຫນຶ່ງໆ ຈະມີບັນດາບຸນຄື: ບຸນກິນຈຽງ, ບຸນລ້ຽງຜີເຮືອນ, ບຸນລ້ຽງຜີບ້ານ, ບຸນລ້ຽງຜີເມືອງ ແລະ ບຸນອື່ນໆ.

ດ້ານສິລະປະວັນນະຄະດີຂອງເຜົ່າໄຕ: ມີນິທານພື້ນເມືອງອັນເກົ່າແກ່, ມີກອນຂັບ, ກອນລຳ, ມີແບບ ຟ້ອນພື້ນເມືອງ ທີ່ເປັນເອກະລັກສະເພາະຂອງຊົນເຜົ່າຕົນເອງເຊັ່ນ: ເຕັ້ນແຊ, ເຕັ້ນຂ້າມໄມ້ປ່ອງ ແລະ ອື່ນໆ, ເຜົ່າໄຕມີເຄື່ອງນຸ່ງຖືເອ້ຍ້ອງ ທີ່ເປັນເອກະລັກຂອງຕົນເອງຈາກສີໄມ້ລາຍມືອັນຄ່ອງແຄ້ວ ແລະ ປານີດຂອງແມ່ຍິງເຜົ່າໄຕ ເຄື່ອງນຸ່ງຫົ່ມເຫຼົ່ານີ້ສ່ວນຫຼາຍແມ່ນແພຝ້າຍທີ່ຍ້ອມນ້ຳນິນສີດຳ ແລະ ມີການຫຍິບແສ່ວ, ຖັກປັກແສ່ວ ດ້ວຍສີມືທີ່ມີສີສັນອັນສວຍສົດງົດງາມທີ່ເປັນສັນຍາລັກອັນສະເພາະຂອງຊົນເຜົ່າໄຕເທົ່ານັ້ນ.

ດ້ານເສດຖະກິດ: ເຜົ່າໄຕ ມີອາຊີບຫຼັກແມ່ນເຮັດນາ, ເຮັດໄຮ່ປູກເຂົ້າຫນຽວ, ເຮັດສວນປູກພືດຜັກ, ລ້ຽງສັດ, ວຽກງານຫັດຖະກຳຈັກສານ, ຕີເຫຼັກ, ຕໍ່າຫູກທໍ່ໄຫມ ແລະ ປູກມອນລ້ຽງມ້ອນ, ຫຍິບຖັກປັກແສ່ວທີ່ມີລວດ ລາຍສວຍງາມ.

ຊົນເຜົ່າໄຕ: ຊົນເຜົ່ານີ້ກໍ່ແມ່ນອີກຊົນເຜົ່າຫນຶ່ງທີ່ຂຶ້ນກັບວົງຄະນະຍາດແຫ່ງຊາດລາວໂດຍສະເພາະແມ່ນ ແຂວງອຸດົມໄຊ ປະກອບມີ 2 ແຂງຄື: ໄຕ ແລະ ໄຕຂາວ, ເຮົາຈະສັງເກດເຫັນ ໃນການນຸ່ງຖື ຂອງເຂົາເຈົ້າ ເຊັ່ນວ່າ: ຖ້ານຸ່ງສີດຳ ເອີ້ນວ່າ: ໄຕດຳ ແລະ ຖ້ານຸ່ງສີຂາວ ເອີ້ນວ່າ: ໄຕຂາວ, ແຕ່ວ່າຊົນເຜົ່າໄຕຈະແຕກຕ່າງກັບຊົນເຜົ່າອື່ນ ເຊັ່ນ: ໃນຫມວດພາສາດຽວກັນຊົນເຜົ່າ ໄຕຈະມີການ ຫຼິ້ນບຸນກິນຈຽງຄືກັບຊົນເຜົ່າ ໃນຫມວດພາສາມົ້ງ - ອິວມຽນ ແລະ ມີທັງການກິນທານ ແລະ ປະຕິບັດທຳຄືຊົນເຜົ່າໃນຫມວດພາສາລາວ-ໄຕ.

## Tai Ethnic Group

Actually, the background of the Tai is similar to Lao and Thai Lue ehnic group. Originally, Tai people moved from the South of China along the Mae Nam Dam River and Nam Mao River and then continued moving to Xern La, Lai Chao and Dienbienphu province, Vietnam and after many years some of them decided to move to Laos, especially in Oudomxay province.

Name: Tai is sometimes called "Thai", but Tai is the name that they have been using for a long time. Tai means "Human".

Actually, there are Tai Dam" Black Tai", Tai Daeng "Red Tai", Tai Khao "White Tai". So, people will call them according to what kind of clothes they wear and what color they use. If we see someone wearing a black one then we realize that they are Tai Dam "Black Tai".

Language: Tai language is considered and identified in the linguistic type of Lao – Tai language. They have their own writing form and it's just like the ancient Lao writing pattern. The language is totally different from the other tribal languages. At the moment, there are only some old people know how to write and read it, but not the young generation.

Belief, tradition and culture: Of course, they have their own rich culture and have been keeping and practicing it from thousand years ago. The majority of Tai people are animist and they have different important spirits in a household such as spirit of the father, spirit of the mother, spirit of the house, spirit of the village, spirit of the region, spirit of the forest, spirit of the river and many more. The most important one is the spirit of the house. Each house has its own ancestral altar which is hung on the corner or somewhere appropriate. The Tai festivals consist of Tai New Year festival celebration, Ghost raising festival (Spirits of the house), and others.

Family: A son is more demand in the family and recognized as one of the most important person because the son is the one who keeps continuing the race of the family (The blood of the family, especially the father). When a daughter gets married she will leave home and follow her husband. They believe that "One wife – one husband" is the greatest practice. All sons and daughters will receive family properties from their parents after marriage, but the first son will receive much more than the others because he is the one who will be in charge of taking care of them until the end of time. What they get from their parents are: Cultivation land area, cattle, buffalo, pig and other things. According to research of the Tai clan in Oudomxay province, it is found that there are many different clans referred to animals: Sing Nyierng - Goat "Yierng clan", Sing Nok Tang Lor – Bird "Nok tang lor clan", Sing Ka – Bird "Ka clan", Sing Ling Khang – Monkey "Ling Khang clan" and other clans. Each clan has its own practice and they won't kill the animal that they are referred to.

House: The traditional Tai's house is similar to the Lao ancient style. The house is built on posts to ensure the safety. The house wall is made of bamboo. Flat timber (Plank) is used for floor. The roof is always covered with rattan leaves and other appropriate leaves. Each house has a balcony or a place for keeping and saving water and always a waste basket under the house as well as storage for keeping materials and equipment. There's no separate bedroom like other tribal houses. Curtain is used to divide the rooms. One important thing is not allowed to put the glass "upside down".

Birth: When a woman gives birth, she has to stay and sleep near the fireplace in order to get warmer to her body. It takes 1 month to go and she has to drink only boiled water with herbal medicine.

Death: When someone passed away, a big funeral is held in order to send the soul of the dead to the heaven. The corpse is buried in the forest near the village.

Literature: There are traditional Tai singing, dancing, bamboo crossing dance, flute blowing, storytelling, and etc. The clothes of the Tai ethnic group are produced from soft cotton with natural black color dying. They do weaving and knitting for having their clothes. You will find that the Tai clothes are very beautiful, colorful and unique.

Economy: Rice cultivation is the main activity for generating their income. Moreover, they also focus more on vegetable planting, animal rising, handicraft making, cotton processing, small trade, and embroidery.